ຂໍ້ມູນຕິດຕໍ່:

Email: syvongsak123@gmail.com ໂທ: +85620 98003648

# Lan Xang Literature

## Lecture 10:
## The Story of "Sinsay"

ຂໍ້ມູນຕິດຕໍ່:
Email: syvongsak123@gmail.com ໂທ: +85620 98003648

# ບົດສອນ

**ວິຊາ:** ວັນນະຄະດີລ້ານຊ້າງ
**ລະຫັດ:** 0907409
**ບົດທີ 4:** ໜັງສືເລື່ອງ: "ສິນໄຊ"
**ຜູ້ບັນຍາຍ:** ປທ. ສົມທະເພີຍ ສີວົງສັກ
**ປີ:** 3
**ພາກຮຽນ:** 2
**ສົກຮຽນ:** 2022-2023

ເວລາ: 90 ນາທີ

| ຂັ້ນຕອນ 1 - ຜົນຮັບທີ່ຕ້ອງການ (Desire Results) | |
|---|---|
| **ສ້າງເປົ້າໝາຍ (Goals):**<br>ນັກຮຽນຈະຮູ້:<br>- ປະຫວັດຂອງນັກແຕ່ງ ແລະ ໄລຍະເວລາຂອງການແຕ່ງ<br>- ກ່ຽວກັບໜັງສືເລື່ອງ: "ສິນໄຊ"<br>- ເນື້ອໃນຂອງໜັງສືເລື່ອງ "ສິນໄຊ" | |
| **ຄວາມເຂົ້າໃຈ (Understand):**<br>ນັກຮຽນຈະເຂົ້າໃຈ:<br>- ປະຫວັດຂອງນັກແຕ່ງ ແລະ ໄລຍະເວລາຂອງການແຕ່ງ<br>- ກ່ຽວກັບໜັງສືເລື່ອງ: "ສິນໄຊ"<br>- ເນື້ອໃນຂອງໜັງສືເລື່ອງ "ສິນໄຊ" | **ຄຳຖາມຫຼັກ (Questions):**<br>1) ແມ່ນໃຜເປັນຜູ້ແຕ່ງເລື່ອງ "ສິນໄຊ" ແລະ ອີງໃສ່ອັນໃດມາອະທິບາຍ?<br>2) ໜັງສືເລື່ອງ "ສິນໄຊ" ມີເນື້ອໃນເວົ້າເຖິງບັນຫາໃດແດ່? |
| **ຄວາມຮູ້ (Knowledge):**<br>- ໃຫ້ນັກຮຽນຮູ້ໄດ້ເຖິງຄວາມເປັນມາຂອງເລື່ອງ, ກ່ຽວກັບໜັງສືເລື່ອງ ແລະ ເນື້ອໃນຂອງເລື່ອງ. | **ທັກສະ (Skills):**<br>- ອະທິບາຍໄດ້ເຖິງຄວາມເປັນມາກ່ຽວກັບໜັງສືເລື່ອງ "ສິນໄຊ" ແລະ ເນື້ອໃນຂອງເລື່ອງ. |
| **ຂັ້ນຕອນ 2 - ຫຼັກຖານປະເມີນ (Evidence)** | |
| **ໜ້າວຽກສິດສອນ (Tasks):**<br>- ສັງເກດການຄົ້ນຄວ້າຂອງນັກສຶກສາ<br>- ສົນທະນາຖາມ-ຕອບ<br>- ແນະນຳການຄົ້ນຄວ້າ.<br>- ໃບວຽກບ້ານ | **ຫຼັກຖານອື່ນໆ (Other Evidence):**<br>- ລາຍງານຜົນການຄົ້ນຄວ້າ<br>- ເນື້ອໃນຄຳຕອບກິດຈະກຳຂອງນັກສຶກສາ<br>- ການສັງຮວມກິດຈະກຳ<br>- ຜົນການກວດວຽກບ້ານ |

**ຂັ້ນຕອນ 3 ແຜນການຮຽນ-ການສອນ (Teaching and Learning Plan)**

- **ສື່ການສອນມີ:**

  ປຶ້ມຕໍາລາວິຊາວັນນະຄະດີລ້ານຊ້າງ, ປຶ້ມຄໍາກອນສັງສິນໄຊ, ເວັບໄຊ້ຂໍ້ມູນ, ຄອມພິວເຕີ, ເຄື່ອງສາຍ LCD.
- **ກິດຈະກໍາການຮຽນ**

**ທວນຄືນ ແລະ ລ້ຽວເຂົ້າສູ່ບົດຮຽນ:**

- **ທວນຄືນບົດຮຽນເກົ່າ**
- ຄູນໍາພານັກຮຽນທວນຄືນບົດຮຽນ ໂດຍໃຫ້ນັກຮຽນເວົ້າເຖິງປະເພນີ, ລັກສະນະການລ້ຽງຜີ ແລະການສິ່ງສະການໃນມະຫາກາບທ້າວຮຸ່ງ-ທ້າວເຈືອງໂດຍຫຍໍ້.
- **ຂັ້ນລ້ຽວເຂົ້າສູ່ບົດສອນ:**

**ບົດທີ 4**

**ໜັງສືເລື່ອງ: "ສິນໄຊ"**

**4.1 ປະຫວັດຂອງນັກແຕ່ງ ແລະ ໄລຍະເວລາຂອງການແຕ່ງ** (20 ນາທີ)

**<u>ກິດຈະກາ 1:</u>**

- ຄູຕັ້ງຄໍາຖາມໃຫ້ນັກສຶກສາຄົ້ນຄວ້າ, ສະເໜີນັກສຶກສາອ່ານປຶ້ມຕໍາລາ

  1) ແມ່ນໃຜເປັນຜູ້ແຕ່ງເລື່ອງ "ສິນໄຊ" ແລະ ອີງໃສ່ອັນໃດມາອະທິບາຍ?
- ຄູໃຫ້ນັກສຶກສາຕອບ 1-2 ຄົນ (5 ນາທີ)
- ຄູສະຫຼຸບບົດຮຽນກິດຈະກໍາ: (15 ນາທີ)

ກ່ອນອື່ນພວກເຮົາອາດສັງເກດວ່າ: ໜັງສື "ສິນໄຊ" ກໍແມ່ນບົດເລື່ອງໜຶ່ງທີ່ໄດ້ສ່ອງແສງຢູ່ໃນໄລຍະອານາຈັກລາວລ້ານຊ້າງຂະຫຍາຍຕົວສູ່ຍອດສູງແຕ່ທ້າຍສະຕະວັດທີ XVII ໃນໄລຍະທີ່ອໍານາດການປົກຄອງສັກດີນາ (ຊົນຊັ້ນສັກດີນາລາວ) ມີຄຸນປະໂຫຍດຕໍ່ຊາດ. ເລື່ອງ: "ສິນໄຊ" ເປັນເລື່ອງໜຶ່ງທີ່ມີຄຸນຄ່າທາງດ້ານເນື້ອໃນ ແລະ ສິລະປະສູງ. ດັ່ງນັ້ນ, ການສັນນິຖານຊອກຮູ້ນາມຂອງຜູ້ແຕ່ງທີ່ແນ່ນອນນັ້ນເປັນເລື່ອງຍາກພຽງແຕ່ສັນນິຖານຕາມບົດກອນໃນເລື່ອງເຊັ່ນວ່າ:

| | |
|---|---|
| ອາທິດ ຈອນລັບແຈ້ງ | ເດືອນສາມສັດຕະພິດ |
| ສະລຸລູບເນື້ອ | ເນົາວະຊ້ອຍຊອບຍາມ |
| ເມື່ອນັ້ນ ປາງຄໍາຄຸ້ມ | ຄະນິງທໍາທຶ່ງມາກ |
| ເຫັນຮຸ່ງ ຍານຮອດແກ້ວ | ທຽວໃຊ້ຊາດພະອົງ |
| ໄກ່ຈັກ ຕົກແຕ່ງຕັ້ງ | ແປງປັ່ນເປັນທ່າ (ສີລາ ວີຣະວົງ, 2512) |

ນອກນີ້ ກໍຍັງອີງໃສ່ຄໍາເຫັນຂອງທ່ານ ມະຫາສີລາ ວີລະວົງ ເຊິ່ງທ່ານເປັນຜູ້ຊີງອິດທິພົນດ້ານວັນນະຄະດີສະໄໝບູຮານເພື່ອສັນນິຖານຜູ້ແຕ່ງດັ່ງນີ້:

ພົງສາວະດານເມືອງຈໍາປາສັກໄດ້ກ່າວໄວ້ວ່າ: ຈຸນລະສັກກະລາດ 1003 ປີມະເສັງ (ພ.ສ 2184) ເຈົ້າເມືອງໜອງບົວລໍາພູພ້ອມດ້ວຍທ້າວ ເພຍ ໄພ່ພົນ ລົງໄປທ່ຽວຄ້ອງຊ້າງຕາມອະລັນຍະປະເທດ ຮາວປ່າ ເມື່ອມາເຖິງ

ຂໍ້ມູນຕິດຕໍ່:

Email: syvongsak123@gmail.com ໂທ: +85620 98003648

ນະຄອນຈຳປາສັກພັກຢູ່ເປັນເວລາເຫິງນານ, ທ້າວ ປາງຄຳເຫັນນາງ ເພົາ ບຸດສາວເຈົ້າເມືອງຈຳປາສັກເປັນຄົນງາມຍາດຍ້ອຍ ຈຶ່ງເກີດຄວາມຮັກໄຄ່ໄມຕີແລ້ວກໍໄດ້ລັກລອບສັງວາດຈົນນາງ ເພົາ ທົ່ງຄັນຈາກນັ້ນປາງຄຳກໍພາໄພ່ພົນກັບໄປໜອງລຳພູ.

ພົງສາວະດານລ້ານຊ້າງສະບັບຂອງພະຍາປະມອນວິຊາພູນ ແລະສະບັບໃບລານຂອງຫໍສະໝຸດວຽງຈັນກ່າວໄວ້ວ່າ: ພະເຈົ້າຕ່ອນຄຳພະລາຊະໂອລົດຂອງເຈົ້າໜ່ອນແກ້ວ ແລະເປັນຫຼານຂອງພະເຈົ້າຂອງພະເຈົ້າເສດຖາທິລາດໄດ້ຂຶ້ນສະເຫວີຍລາຊະສົມບັດກຸງສີສັດຕະນາກຄະນະຫຸດວຽງຈັນ ປີມະແມ (ພ.ສ 2182-2198). ພ.ສ 2185 ພະເຈົ້າສຸລິສາ ທຳມິກະລາດ ເປັນໂອລົດຂອງເຈົ້າຕ່ອນຄຳນີ້ເອງ ດັ່ງນີ້, ເຈົ້າຕ່ອນຄຳອາດຈະເປັນຄົນດຽວກັບເຈົ້າປາງຄຳ ຫຼື ບໍ່? ຈຶ່ງໃຫ້ຄຳສັນນິຖານວ່າ: ທ້າວ ປາງຄຳ ເປັນຜູ້ແຕ່ງເລື່ອງສິນໄຊນັ້ນເອງ. ຫາກເປັນດັ່ງນັ້ນ ທ້າວປາງຄຳ ຕ້ອງເປັນກະສັດ ຫຼື ພະວໍລະວົງຂອງກະສັດແຫ່ງກຸງສີສັດຕະນາກ.

ເມືອງໜອງລຳພູມີຄວາມອຸດົມສົມບູນເໝາະແກ່ການລ້ຽງຊ້າງ. ສະນັ້ນ, ມະຫາກະສັດວຽງຈັນຈຶ່ງເອົາເມືອງນີ້ເປັນເມືອງອຸປະລາດ. ຖ້າມີລາຊະໂອລົດອົງໃດຈະຂຶ້ນປົກຄອງເມືອງຕ້ອງໃຫ້ໄປປົກຄອງ ຫຼື ໄປຢູ່ເມືອງສາກ່ອນເພື່ອເຝິກແອບຍຸດທະຫັດຖີຊ້າງ. ສະນັ້ນ, ການທີ່ທ້າວ ປາງຄຳ ໄປທ່ຽວຄ້ອງຊ້າງກໍອາດຈະເປັນຄວາມຈິງຢູ່ ແລະ ທ້າວປາງຄຳກໍອາດຈະເປັນພະລາຊະໂອລົດຜູ້ຈະໄປຄອງເມືອງຈຶ່ງໄດ້ປະທັບຢູ່ບົວລຳພູ.

ໃນເວລາດຽວກັນນີ້, ທາງກຸງສີອາຍຸດທະຍາກໍມີກະສັດອົງໜຶ່ງມີນາມຄ້າຍກັບປາງຄຳຊື່ວ່າ: ເຈົ້າຜາສາດທອງ. ຄຳວ່າ: ຜາສາດທອງ ມີຄວາມໝາຍວ່າປາງຄຳນັ້ນເອງ. ເຈົ້າຜາສາດທອງຂຶ້ນສະເຫວີຍລາດ (ພ.ສ 2173-2198) ສະໄໝນີ້ເປັນສະໄໝວັນນະຄະດີຂອງປະເທດທັງສອງຕ້ອງເອົາແບບນຳກັນ.

ທ້າວ ປາງຄຳ ແຕ່ງເລື່ອງນີ້ໃນປີສະດຸ, ຈະແມ່ນປີສະດຸສັກກະລາດເທົ່າໃດບໍ່ແນ່ອາດຈະເປັນປີສະດຸຈຸນລະສັກກະລາດ 1006 (ພ.ສ 2187) ຫຼັງຈາກກັບມາແຕ່ນະຄອນຈຳປາສັກໄດ້ແຕ່ງສອງປີ. ການແຕ່ງເລື່ອງ ສິນໄຊ ຜູ້ແຕ່ງໄດ້ເອົາເລື່ອງສ່ວນຕົວເຂົ້າໃສ່ນຳບາງເລັກນ້ອຍ ຕົວຢ່າງ: “ບັ້ນນາກສະດຸ້ງ” ເລື່ອງບໍ່ໄດ້ກ່າວເຖິງພະຍານາກຄິດຮອດນາງສີດາຈັນ. ຜູ້ແຕ່ງໄດ້ຍົກຍືບເອົາເລື່ອງສ່ວນຕົວຄິດຮອດນາງເພົາມາແທນ ແລະ ສະບັບປາງຄຳກໍຈົບພຽງເທົ່ານີ້ຕໍ່ມາຄົນອື່ນແຕ່ງຕື່ມ, ແຕ່ຄຳກອນບໍ່ມ່ວນຄືຮອຍມືເດີມ.

ອີກປະການໜຶ່ງທີ່ຄວນສັງເກດຢູ່ໃນຕຳນານ ຫຼື ພົງສາວະດານເມືອງຈຳປາສັກວ່າ: ກະສັດແຫ່ງເມືອງຈຳປາສັກຈຸນລະສັກກະລາດ 900 ປີປາຍ, ນັ້ນແມ່ນພະຍາກາມະທາເປັນອ້າຍຂອງນັນທະເສດຖີຜູ້ເປັນບິດາຂອງນາງທັງເຈັດໃນເລື່ອງຕອນພະຍາກຸດສະລາດບອກໃຫ້ຂຸນຄານລາສະທູດໄປຖວາຍພະລາຊະສານຕໍ່ພະຍາກາມະທາວ່າ:

ຂຸນແຂກມ້ຽນ ນົບບາດປະຊິດຊຽງ
ຖວາຍເງິນຕາ ໝື່ນຄຳພັນກ້ອນ
ເມື່ອນັ້ນ ຂວາງໆທ້າວ ກາມະທາກະສັດໃຫຍ່
ຊົມຊື່ນຕ້ານ ຖາມຖ້ອຍຄູ່ຄອງ (ສີລາ ວິຣະວົງ, 2512)

ເຊິ່ງເປັນຫຼັກຖານອີກຢ່າງໜຶ່ງສະແດງໃຫ້ເຫັນວ່າ: ປາງຄຳໄດ້ເອົາເລື່ອງສ່ວນຕົວມາຊ້ອນໄວ້ໃນເລື່ອງສິນໄຊ, ສ່ວນພະຍາກາມະທາໃນເລື່ອງສິນໄຊ ແລະ ກາມະທາໃນຕຳນານຈຳປາສັກອາດຈະແມ່ນຄົນດຽວກັນ.

ຈາກຂໍ້ມູນຂ້າງເທິງ ມະຫາສິລາ ວິລະວົງ ສັນນິຖານວ່າ: ເລື່ອງສິນໄຊ ແມ່ນທ້າວປາງຄຳເປັນຜູ້ແຕ່ງຂຶ້ນ, ສ່ວນທ້າວປາງຄຳ (ຜູ້ແຕ່ງ) ເອົາເລື່ອງສ່ວນຕົວເຂົ້າແຝງຖືວ່າເປັນຜູ້ຮູ້ຮີດຄອງປະເພນີ, ສັງຄົມ ແລະ ການປົກຄອງເປັນຢ່າງດີ ແລະ ບໍ່ແມ່ນຄົນທຳມະດາ.

ດັ່ງນັ້ນ, ໃນຂັ້ນຕົ້ນພວກເຮົາອາດຮັບຮອງວ່າ: ປາງຄຳເປັນຜູ້ແຕ່ງເພາະຍັງບໍ່ທັນຊອກຂໍ້ມູນໄດ້ສົມບູນແຕ່ຄວາມຈິງແລ້ວປາງຄຳບາງເທື່ອກໍອາດຈະເປັນນາມປາກກາຂອງນັກປາດອາຈານຜູ້ໃດຜູ້ໜຶ່ງກໍເປັນໄປໄດ້.

**4.2 ກ່ຽວກັບໜັງສືເລື່ອງ: "ສິນໄຊ"** (20 ນາທີ)

ໜັງສືເລື່ອງ ສິນໄຊຊາດົກນີ້ ທີ່ພົບຢູ່ໃນປະເທດລາວເຮົາໃນປັດຈຸບັນມີ 2 ປະເພດຄື: ປະເພດທີ່ໜຶ່ງແຕ່ງເປັນຄຳຮ້ອຍກອງ ແລະ ປະເພດທີ່ສອງແຕ່ງເປັນຄຳຮ້ອຍແກ້ວສຳລັບອ່ານ ຫຼື ເທດ ເຊິ່ງເອີ້ນວ່າ: ລຳສິນໄຊ ມີ 21 ຜູກແຕ່ລະຜູກມີ 20 ຫຼື 25 ໃບລານ, ສ່ວນປະເພດຄຳກອນຜູ້ແຕ່ງອ້າງວ່າໄດ້ແຕ່ງຈາກ "ສິນໄຊຍາຊາດົກ" ດັ່ງຄຳກອນຕອນ "ສົມມຸດຕິບັ້ນ" ວ່າ:

| | |
|---|---|
| ບັດນີ້ ຂ້າຈັກປຸນແຕ່ງຕັ້ງ | ໄຊຊາດແປທຳ ກ່ອນແລ້ວ |
| ທີ່ເປັນ ຍຸງແຍງຝຸງ | ພໍ່າເພັງພາຍຊ້ອຍ |
| ຄວນທີ່ ອັດສະຈັນລ້ຳ | ໂລກາກົ່ງໂລກ |
| ມີໃນ ຫ້າສິບຊາດແທ້ | ທຽວໃຊ້ສິ່ງເວນ ແທ້ແລ້ວ (ສິລາ ວິຣະວົງ, 2512) |

ຕາມທ່ານ ສິລາ ວິລະວົງ ໃຫ້ຮູ້ວ່າ: ໜັງສືເລື່ອງນີ້ເປັນໜັງສືແຕ່ງຂຶ້ນໃໝ່ລຸນປີຈຸລະສັກກະລາດ (1200-1300) ເສດມານັ້ນ ແລະ ແຕ່ງຂຶ້ນໃນປະເທດລາວລ້ານນາຫຼັງມາໄດ້ຂະຫຍາຍໄປທີ່ວລາວລ້ານຊ້າງມີເຫດຜົນດັ່ງນີ້:

- ທ່ານ ສິລາ ວິລະວົງ ຊອກຄົ້ນຄວ້າຫາໜັງສືສະຕະກະທັງຫຼາຍທີ່ເປັນພາສາບາລີຢູ່ໃນຄຳພີພະສູດພະໄຕປີດົກເລີ່ມແຕ່ເອກະນິປາຕະຊາຕະກະຈົນຮອດມະຫານິປາຕະຊາກະຕະ ເຊິ່ງໂຮມເປັນໜັງສືເລື່ອງທີ່ເວົ້າເຖິງພະເຈົ້າ 550 ຊາດບໍ່ປາກົດເຫັນເລື່ອງສິນໄຊຊາດົກ. ສ່ວນຢູ່ຫໍສະໝຸດ Bangkok ປະເທດໄທກໍບໍ່ເຫັນເລື່ອງສິນໄຊຊາດົກ.
- ຢູ່ໃນລຳສິນໄຊ ລື ສິນໄຊຊາດົກ ສະບັບທີ່ຂຽນເປັນອັກສອນທຳມີຄຳບາລີຂຶ້ນຕົ້ນພຽງ 2-3 ຄຳເຊັ່ນ: "ເອວະເມສຸດຕັງເອກັງສຳມະຍັງພະ ຄະວາ ສາສະຄະເທ ວິຫາລະຕິ ເອສຸວະເນ ໂພສາທະໂວ ດຸລາສັບປຸລິສາທັງຫຼາຍ" ນີ້ສະແດງໃຫ້ເຫັນວ່າ: ເລື່ອງສິນໄຊ ສະບັບນີ້ບໍ່ມີພາສາບາລີແຕ່ດັ່ງເດີມ, ເປັນເລື່ອງແຕ່ງຂຶ້ນມາໃໝ່ຕ່າງຫາກ.
- ໃນເລື່ອງສິນໄຊສະບັບທີ່ຂຽນເປັນຕົວອັກສອນທຳໄດ້ກ່າວໄວ້ວ່າ: ນາງສຸມຸນທາ ນ້ອງສາວຂອງພະຍາກຸດສະລາດເກີດເມື່ອປີກາບສະງ້າ (ປີມະເມຍ) ເດືອນສີ່ ແຮມສາມຄ່ຳ ວັນທິດ ຍາມກ່ອງງາຍ ສັກກະລາດ 615, ສັກກະລາດທີ່ກ່າວມານັ້ນແມ່ນຈຸນລະສັກກະລາດນີ້ກໍແມ່ນບັນຫາໜຶ່ງທີ່ສະແດງໃຫ້ເຫັນວ່າ: ເລື່ອງສິນໄຊບໍ່ມີມາແຕ່ຄຳພີເດີມທີ່ເປັນພາສາບາລີ, ແຕ່ງຂຶ້ນໃໝ່ພາຍລຸນຈຸນລະສັກກະລາດ 600 ປີປາຍມານີ້, ຈຶ່ງເປັນເລື່ອງຊາດົກ ທີ່ມີມາໃນຄຳພີບາລີແທ້ບໍ່ມີການບອກສັກກະລາດ (ຈຸນລະສັກກະລາດ). ນອກຈາກນັ້ນ ຍັງກ່າວໃນສະບັບພະຊາບັ້ນຄືບັ້ນອອກບວດພະຍາກຸດສະກະລາດຄິດຮອດນ້ອງສາວຫຼາຍຈຶ່ງສະລະລາຊະບັນລັງອອກບວດເປັນພິກຂຸ ເພື່ອນຳຫານ້ອງສາວຈົນເຖິງເມືອງຈຳປານັ້ນ ວັນໜຶ່ງໄປບິນພະບາດໄປເຫັນລູກສາວທັງເຈັດນາງຂອງນັນຖະເສດຖີໄປໃສ່ບາດ, ມະຫາເຖນກຸດສະລາດມີຄວາມມັກຮັກຈຶ່ງກັບມາມາລາສິກຈາກນັ້ນແລ້ວແຕ່ງອາມາດໄປສູ່ຂໍເອົານາງທັງເຈັດໃນສ່ວນນີ້

ປະເດັນໜຶ່ງສະແດງວ່າ: ເລື່ອງນີ້ ບໍ່ມີມາແຕ່ຄຳພີຊາດົກເດີມ. ເປັນເລື່ອງແຕ່ງຂຶ້ນຕາມນິໄສຂອງຄົນທີ່ນັບຖືພຸດທະສາສະໜາໃນສະໄໝຂອງຜູ້ແຕ່ງເອງ.

- ໃນບັ້ນປາຍຂອງເລື່ອງສະບັບເປັນອັກສອນທຳ ທີ່ກ່າວມາຂ້າງເທິງນັ້ນໄດ້ກ່າວເຖິງພະຍາສັງຍະລາດລູກຊາຍຂອງສິນໄຊລົບເລວກັບລູກຊາຍຂອງທ້າວທັງ 6 ຢູ່ເມືອງອິນທະສາກາດ, ພະຍາສັງຍະລາດໄດ້ເຊີນເອົາບັນດາຕົວເມືອງທັງຫຼາຍທີ່ມີຊື່ຢູ່ໃນປະຫວັດສາດລາວ, ໄທມາຊ່ວຍເຊັ່ນ: ເມືອງຫໍ້, ເມືອງທວາຍ, ເມືອງມ່ານ, ເມືອງລ້ານຊ້າງ.

| | |
|---|---|
| " ກໍ້າຝ່າຍຫໍ້ | ພະຍາໃຫຍ່ຫົວຂອງ ກໍເຖິງ |
| ພູໄຊທ້າວ | ສະເຫວີຍລາດເມືອງທວາຍ ກໍເຖິງ |
| ພະບາດທ້າວ | ສະເຫວີຍລາດເມືອງລັດຖີ ກໍເຖິງ |
| ຂໍເຊີນ ເຈົ້າລ້ານຊ້າງ | ມາພ້ອມຊ່ວຍມື" |

ສ່ວນລູກຂອງທ້າວທັງ 6 ກໍເກນເອົາພວກລາວເທິງ (ພວກຂ້າ) ທີ່ມີຊື່ຢູ່ໃນໜັງສືທ້າວຮຸ່ງທ້າວເຈືອງໃຫ້ມາຊ່ວຍເຊັ່ນ: ຂ້າພາງດຳ, ພາງແດງ, ຂ້າດອຍງອນ, ດອຍຮັງ, ຂ້າພະນອງເປັນຕົ້ນຄື:

| | |
|---|---|
| ແມ່ນວ່າ ພາງພາຍເບື້ອງ | ດອຍນ້ອງສອນສູ່ |
| ເຂົາກໍສິ່ງ ຊ່ວຍເຈົ້າ | ເມືອງນັ້ນບໍ່ຫຼູ |
| ແມ່ນວ່າ ທຸກນະຄອນກໍ້າ | ພະນອງຖອງອະນຸລາດ |
| ເມືອງຝ່າຍຊັ້ນ | ລະແດດ້າວໂຄມເຕັງ |

ສົງຄາມລະຫວ່າງລູກຂອງທ້າວ ສິນໄຊ ກັບລູກທ້າວທັງ 6 ມັນເປັນສິ່ງສັນນິຖານວ່າແມ່ນສົງຄາມລະຫວ່າງຊາວຊຽງໃໝ່ກັບພວກຂອມເຈົ້າຖິ່ນເດີມໃນສະໄໝພະຍາເມັງລາຍ (ຣາຍ).

ປະເດັນທີ່ກ່າວມາທັງໝົດຂ້າງເທິງນັ້ນ ທ່ານ ມະຫາ ສີລາ ວິລະວົງ ສັນນິຖານໃຫ້ພວກເຮົາຮັບຮູ້ວ່າ: "ເລື່ອງສິນໄຊ" ແມ່ນຄົນລາວເອງເປັນຜູ້ແຕ່ງໂດຍອີງໃສ່ເງື່ອນໄຂປະຫວັດສາດລາວໃນສະໄໝນັ້ນ, ບໍ່ແມ່ນເລື່ອງບັນທຶກຄືນຈາກເລື່ອງໃດໜຶ່ງ. ອີກດ້ານໜຶ່ງນັກແຕ່ງອີງໃສ່ສະບັບທີ່ເປັນອັກສອນທຳມາຄັດຈ້ອນເລືອກເຟັ້ນ, ບໍ່ແມ່ນຈຶດກ່າຍຈາກເລື່ອງເດີມທັງໝົດ.

**4.3 ເນື້ອໃນຂອງໜັງສືເລື່ອງ "ສິນໄຊ"** (20 ນາທີ)

**<u>ກິດຈະກຳ 2:</u>**

- ຄູຕັ້ງຄຳຖາມໃຫ້ນັກສຶກສາຄົ້ນຄວ້າ, ສະເໜີນັກສຶກສາອ່ານປຶ້ມຕຳລາ
- ໜັງສືເລື່ອງ "ສິນໄຊ" ມີເນື້ອໃນເວົ້າເຖິງບັນຫາໃດແດ່?
- ຄູໃຫ້ນັກສຶກສາຕອບ 1-2 ຄົນ (5 ນາທີ)
- ຄູສະຫຼຸບບົດຮຽນກິດຈະກຳ: (15 ນາທີ)

ໜັງສືເລື່ອງ: "ສິນໄຊ" ແມ່ນຊື່ເອີ້ນດັ່ງເດີມ, ສ່ວນວ່າເລື່ອງ: "ສັງສິນໄຊ" ຫາກໍເກີດຂຶ້ນມາໃໝ່ໂດຍສະເພາະແມ່ນໄລຍະເພີ່ນຈັດພິມເລື່ອງນີ້ຂຶ້ນໃໝ່. ເລື່ອງນີ້ແບ່ງອອກເປັນ 15 ບັ້ນ, ອີງຕາມສະບັບປາງຄຳ "ໄຊຊະນະຂອງສິນໄຊ ເປັນຫົວເລື່ອງພື້ນຖານຂອງເລື່ອງສິນໄຊ" ສ່ວນຫົວຂໍ້ນັ້ນແມ່ນໃຈຄວາມຕ່າງໆທີ່ມີໃນເລື່ອງ, ຫົວຂໍ້ພາຈັດບັ້ນຕ່າງໆໄດ້. ຕົວຢ່າງ: ການລັກລອບ ຫຼື ຕ້ານສິນ 5 ແມ່ນອະທິນາ ຄືລັກເອົາຂອງເພີ່ນ ໝາຍຄວາມວ່າບໍ່ໃຫ້ລັກ. ຄັນເອົາ

ດັ່ງຍັກກຸມພັນເອົານາງ ສຸມຸນທາ; ຫົວຂໍ້ແມ່ນການລົງໂທດຜູ້ລະເມີດອະທິນາທານສ່ວນຫຼາຍແມ່ນການຕາຍຂອງຍັກກຸມພັນ. ຄໍາວ່າ "ເລື່ອງສັງສິນໄຊ" ແມ່ນອະທິບາຍເຖິງຄວາມຜູກພັນສາມັກຄີ ຮັກຫອມຕອມຕຸ້ມລະຫວ່າງພີ່ນ້ອງຮ່ວມອຸທອນດຽວທີ່ເອົາຊະນະອຸປະສັກນາໆປະການທີ່ມາຂັດຂວາງ..., ແຕ່ຢູ່ເບື້ອງຫຼັງຂອງເລື່ອງ ສິນໄຊ ຍັງມີຫຼາຍເນື້ອໃນທີ່ພວກເຮົາຄວນຊອກຮູ້ຕື່ມອີກເຊັ່ນ: ຄວາມຮັກ ຫອມຕອມຕຸ້ມລະຫວ່າງແມ່ ແລະ ລູກ, ພີ່ນ້ອງ (ອ້າຍນ້ອງ), ສາມີ-ພັນລະຍາ, ຄວາມບໍ່ຮອບຄອບຂອງຜູ້ປົກຄອງ, ຄວາມເກັ່ງກ້າສາມາດຂອງສິນໄຊ, ຄວາມອະທໍາຂອງທ້າວທັງຫົກ ແລະ ກໍາລັງອະທໍາອື່ນໆ.

ຈາກການກໍານົດເນື້ອໃນລວມຂອງເລື່ອງມາຂ້າງເທິງນີ້ ເພື່ອສະດວກໃນການວິເຄາະຕົວຈິງແລ້ວເພິ່ນໄດ້ແບ່ງອອກເປັນແຕ່ລະບັ້ນທີ່ສະເໜີນມາແລ້ວດັ່ງນີ້:

**1. ສິມມຸດຕິບັ້ນ**

ແມ່ນບັ້ນເປີດເລື່ອງທີ່ເວົ້າເຖິງນາມຂອງຜູ້ແຕ່ງ, ການປົກຄອງເມືອງຂອງພະຍາກຸດສະລາດ. ມີມະເຫສີເອກຊື່ ນາງ ຈັນທາ ແລະ ມີກະນິຖາ ຊື່ ສຸມຸນທາພ້ອມດ້ວຍປະຊາລາຊະດອນດໍາລົງຊີວິດຢ່າງເປັນສຸກດັ່ງເລື່ອງບາງຕອນວ່າ:

| | |
|---|---|
| ບັດນີ້ ຍັງມີນັກຄະລາດລໍ້າ | ຊັ້ນຊີ່ເປັງຈານ |
| ນິຄົມຄັນ | ຄັງເພັງພໍຕື້ |
| ຊຽງຫຼວງລື້ນ | ລຸງລັງລ້ານຍ່ານ |
| ນໍ້າແຜ່ລ້ອມ | ລະວັງຕ້ານຊື່ອຕາ |
| ຮຸ່ງຄໍ່າລົ້ນ | ຊາວເທດທຽວສະເພົາ |
| ອຸດົມໂດຍ | ດັ່ງດາວອະດິງຟ້າ |
| ລືກຽນເທົ້າ | ທານີໃນທີບ |
| ເມືອງໃຫຍ່ກວ້າງ | ຄົນເຄົ້າຄັ່ງໂຮ. (ສີລາ ວີຣະວົງ, 2512) |

**2. ຍັກກະສັນບັ້ນ**

ແມ່ນບັ້ນທີ່ສ່ອງແສງເຖິງຄວາມຄິດຂອງຍັກກຸມພັນທີ່ຢາກໄດ້ມະເຫສີມາທຽມຂ້າງແຕ່ບໍ່ຮູ້ວ່າຢູ່ໃສ?, ແມ່ນໃຜ? ກຸມພັນຈິ່ງໄປຫາພະຍາ ເວດສຸວັນ ເບິ່ງຊາຕາຈິ່ງຮູ້ວ່າເປັນມະນຸດຢູ່ເມືອງເປັງຈານຊື່ວ່າ ນາງ ສຸມຸນທາ.

| | |
|---|---|
| ເມື່ອນັ້ນ ອິງຕັດຊີ້ | ເສົາວະນີເນື່ອງກ່າວ |
| ນາງນັ້ນ ລົງເກີດກໍ້າ | ນະຄອນລ້ານໂລກຄົນ |
| ເປັນນ້ອງທ້າວ | ຊັ້ນຊີ່ເປັງຈານ |
| ຮຽກວ່າ ສຸມຸນທານາງ | ຮູບສະເໜີເໝືອນແຕ້ມ |
| ບຸນສູງເຊື້ອ | ຊຽງຂວາງຂັດຕິຍະລາດ |
| ໂສມຍິ່ງຍ້ອຍ | ລືເທົ້າໝື່ນເມືອງ (ສີລາ ວີຣະວົງ, 2512) |

ຂໍ້ມູນຕິດຕໍ່:
Email: syvongsak123@gmail.com ໂທ: +85620 98003648

**3. ສຸບິນບັ້ນ (ບັ້ນພະຍາກຸດສະລາດນອນຝັນ)**

ແມ່ນບັ້ນທີ່ກ່າວເຖິງພະຍາກຸດສະລາດນອນຝັນ ເຊິ່ງເປັນການບອກໃຫ້ຮູ້ລ່ວງໜ້າວ່າຈະມີເຫດຮ້າຍເກີດຂຶ້ນຢູ່ໃນເມືອງເປັງຈານຈຶ່ງເຮັດໃຫ້ພະຍາຜູ້ປົກຄອງເມືອງຕະຫຼອດເຖິງເສນາລາຊະດອນຕ້ອງໂສກເສົ້າໄປຕາມໆ.

| | |
|---|---|
| ເຍື້ອງຖອດດ້າງ | ດາບ່ຽງບັງຄີງ |
| ພາຍມັນຖື | ເຖື່ອນເຖິງເຖືອເນື້ອ |
| ຟັນແຂນຂ້າງ | ຂວາເຂີນຂາດໄຫຼ່ |
| ເລືອດລັ່ງລົ້ນ | ລິງເທົ້າທົ່ວທະລາ. (ສີລາ ວິຣະວົງ, 2512) |

**4. ວິບປະວາສະບັ້ນ (ບັ້ນນາງສຸມຸນທາພັດພາກ)**

ກ່າວເຖິງນາງ ສຸມຸນທາ ອອກໄປທ່ຽວຊົມສວນອຸທິຍານແລ້ວຖືກຍັກກຸມພັນທະຍານມາທາງເວຫາອາກາດອູ້ມເອົາ ນາງ ສຸມຸນທາໄປ, ເຮັດໃຫ້ຊາວເມືອງເປັງຈານ ແຕ່ເສນາບໍດີເຖິງລາຊະດອນສັດສາວາສິ່ງຕົ້ນໄມ້... ຕ້ອງພອຍໂສກເສົ້າເຫງົາຫງອຍທັງເມືອງ.

| | |
|---|---|
| ຍັກໃຫຍ່ຍ້າຍ | ທະຍານຮອດປຸນເປືອງ |
| ກຸມເອົານາງ | ພາກພົນພະລັນໄດ້ |
| ມັນສະແຫວງຂຶ້ນ | ເວຫາປອມເມກ |
| ອູ້ມອ່ອນແກ້ວ | ສະແດງຕຸ້ມຕ່ອມຂວັນ. (ສີລາ ວິຣະວົງ, 2512) |

**5. ບັບພະຊາບັ້ນ**

ກ່າວເຖິງພະຍາກຸດສະລາດອອກບວດເປັນພິຊຸສິງເພື່ອຕາມຫານ້ອງສາວ, ເມື່ອໄປເຖິງເມືອງຈຳປາກໍໄປຫາລູກສາວທັງເຈັດຂອງນັນຖະເສດຖີຄິດຢາກໄດ້ ຈຶ່ງກັບມາລາສິກຂາ.

| | | |
|---|---|---|
| ພໍເມື່ອ | ມະຫາເຖນໄທ້ | ທົງທຳກຸດສະລາດ |
| | ເດີນຮອດແລ້ວ | ກາງຄຸ້ມຂ່ວງປາງ |
| ເຂົາກໍ | ສຶນໆເຂົ້າ | ຍາຄູຕັກບາດ |
| | ມະຫາເຖນລາດເຈົ້າ | ແລແລ້ວລວດກະສັ້ນ. (ສີລາ ວິຣະວົງ, 2512) |

**6. ວິວາຫະມັງຄະລາບັ້ນ**

ກ່າວພະຍາກຸດສະລາດເມື່ອລາສິກຂາແລ້ວກໍມີຄວາມຄິດຮອດຄິດເຖິງລູກສາວຂອງນັນຖະເສດຖີຢູ່ບໍ່ເລີກບໍ່ແລ້ວ, ຈຶ່ງຕັດສິນໃຈແຕ່ງລາດສະທູດຊື່ ຊຸນຄານ ນຳເຄື່ອງບັນນາການເພື່ອໄປສູ່ຂໍລູກສາວທັງເຈັດຂອງນັນຖະເສດຖີມາເປັນມະເຫສີ.

| | |
|---|---|
| ພະບາດທ້າວ | ຄຸ້ມຮຸ່ງຫາແຮງ |
| ກໍບໍ່ວາງວິນຍານ | ທີ່ກະສັນເສຍໄດ້ |
| ເພື່ອຄະນຶງເຖິງແກ້ວ | ກຸມາຣີເຈັດນາດ |

ບອກແກ່ອາມາດຊັ້ນ ຂຸນຮູ້ຣິດຄອງ (ສີລາ ວິຣະວົງ, 2512)

**7. ປະຕິສົນທິບັ້ນ**

ກ່າວເຖິງພະຍາກຸດສະລາດໃຫ້ມະເຫສີທັງແປດຄົນຕັ້ງອະຖານເອົາບຸດຊາຍເກີດນໍາ ແລະ ເປັນຜູ້ທີ່ເກັ່ງກ້າດ້ວຍສາດຕະສິນອາຄົມ ເພື່ອນໍາເອົານ້ອງສາວຢູ່ເມືອງຍັກກັບມາໃຫ້ໄດ້ ໃນທີ່ສຸດກໍໄດ້ຕາມຄວາມປາຖະໜາ. ນາງຈັນທາ ເທວີ ເຂົ້າປະສູດລູກເປັນຊ້າງ, ນາງ ຫຼ້າ ປະສູກລູກເປັນ ຄົນ ແລະ ຫອຍ, ສ່ວນນາງທັງຫົກມີລູກຊາຍເກີດມາຜູ້ລະຄົນ. ເຫດການດັ່ງກ່າວເຫັນທີແປກປະຫຼາດກໍວິພິດໄພຮ້າຍແຮງຕໍ່ບ້ານເມືອງ ພະຍາກຸດສະລາດຈຶ່ງບັງ ຄັບນາງຈັນທາ ແລະ ນາງຫຼ້າ ພ້ອມດ້ວຍບຸດຕາ ເນລະເທດອອກຈາກເມືອງເປັງຈານດ້ວຍຄວາມສົມເພດເວດທະນາ.

**8. ໂຄຈອນບັ້ນ**

ກ່າວເຖິງການຕິດຕາມນໍາຫາອາ ສຸມຸນທາ ຢູ່ເມືອງອະໂນລາດຂອງສິນໄຊ, ມັນໄດ້ສ່ອງແສງເຖິງຄວາມສາມາດອາດຫານຂອງສິນໄຊ ໃນການຜ່ານຜ່າອຸປະສັກຢ່າງມີຜົນສໍາເລັດ ແລະ ສ່ອງແສງເຖິງທາດແທ້ຂອງກໍາລັງອະທໍາທີ່ເປັນຄົນຂາດຄວາມສາມາດຕົວແທນແມ່ນທ້າວທັງຫົກ.

**9. ອະນຸຍຸດທະກໍາບັ້ນ**

ສ່ອງແສງເຖິງສິນໄຊ ແລະ ສັງທອງ ສອງຕົວລະຄອນພີ່ນ້ອງເອົານາງສຸມຸນທາອອກຈາກເມືອງອະໂນລາດ, ສ່ອງແສງເຖິງການສູ້ຣົບກັບຍັກ ແລະ ຂ້າຍັກຊື່ວ່າ ໄກສີ, ໄຄສີ ແລະ ເພັດສະໄຄ. ສ່ວນໄອຍຸເວດ ຜູ້ເປັນຫຼານກຸມ ພັນສູ້ກັບສິນໄຊບໍ່ໄຫວຈຶ່ງກັບໄປທູນຕໍ່ກຸມພັນມະຫາຍັກ.

**10. ມະຫາຍຸດທະກໍາບັ້ນ**

ບັ້ນທີ່ສິນໄຊ, ສັງທອງ ແລະ ສີໂຫ ຕໍ່ສູ້ກັບຍັກກຸມພັນໂດຍກົງ, ເປັນບັ້ນຣົບຂະໜາດໃຫຍ່ ສຸດທ້າຍຍັກກຸມພັນຕາຍ ສ່ວນສິນໄຊໄດ້ຮັບໄຊຊະນະ ແລະ ໄດ້ອາສຸມຸນທາແລ້ວກໍພາອາກັບເມືອງອະໂນລາດເພື່ອທໍາພິທີສິ່ງສະການຍັກກຸມພັນ.

**11. ນາຄະຍຸດທະກໍາບັ້ນ**

ກ່າວເຖິງການຕໍ່ສູ້ລະຫວ່າງສິນໄຊ ແລະ ພະຍານາກໃນເວລາສິນໄຊໄປນໍານ້ອງສາວລູກຂອງອາຢູ່ເມືອງນາກຊື່ ນາງສີດາຈັນ, ໃນການຕໍ່ສູ້ຄັ້ງນີ້ ພະຍານາກປະລາໄຊ ແລະ ເຮັດໃຫ້ສິນໄຊໄດ້ນາງສີດາຈັນມາຫາອາສຸມຸນທາໄດ້ຢ່າງໜ້າພໍໃຈ.

**12. ມຸດຕະນັງບັ້ນ (ຕອນກັບຄືນ)**

ໄດ້ກ່າວເຖິງ ສິນໄຊ, ນາງ ສຸມຸນທາ ແລະ ນາງ ສີດາຈັນ ອອກຈາກເມືອງອະໂນລາດເພື່ອກັບຄືນມາຫາທ້າວທັງຫົກທີ່ລໍຄອຍຢູ່ທາງເພື່ອພ້ອມກັນກັບເມືອງເປັງຈານ.

**13. ກາລະບັ້ນ. (ບັ້ນສິນໄຊຕົກເຫວ)**

ບັ້ນນີ້ໄດ້ກ່າວເຖິງການຕາຍຂອງສິນໄຊ ຍ້ອນທ້າວທັງຫົກເປັນຜູ້ວາງແຜນພິປອງຂ້າໂດຍບອກສິນໄຊໄປອາບນໍ້າ ແລະຊຸກລົງເຫວ. ຈາກນັ້ນ ທ້າວທັງຫົກຄຸມເອົານາງ ສຸມຸນທາ ແລະ ນາງ ສີດາຈັນ ໄປເມືອງເປັງຈານເພື່ອກາບທູນຕໍ່ພະຍາກຸດສະລາດ ອົງພະບິດາ. ນອກນັ້ນ ຍັງໄດ້ກ່າວເຖິງພະຍາອິນສິ່ງມາໂຜດເອົາສິນໄຊຄືນມາໄດ້ ແລະ ເອົາໄປສິ່ງໃຫ້ພະມານດາຂອງທ້າວທີ່ວິມານໃນອະລັນຍາແຫ່ງເດີມ.

**14. ສາຖາປະນາບັ້ນ. (ບາສີສະເຫວີຍລາດ)**

ກ່າວເຖິງຂະບວນຂອງພະຍາກຸດສະລາດມາອັນເຊີນເອົາທ້າວ ສິນໄຊ ພ້ອມແມ່ ແລະ ປ້າ (ມະເຫສີທັງສອງຂອງພະຍາກຸດສະລາດ) ກັບໄປເມືອງເປັງຈານເພື່ອຂຶ້ນສະເຫວີຍເມືອງເປັງຈານ ແລະ ລົງໂທດພວກທ້າວທັງຫົກພ້ອມແມ່ຂອງພວກເຂົາ ຈາກນັ້ນກໍເນລະເທດອອກຈາກເມືອງເປັງຈານ.

**15. ບັ້ນນາກສະດຸ້ງ**

ບັ້ນນີ້ເປັນບັ້ນທ້າຍຂອງເລື່ອງສະບັບຄໍາກອນປາງຄໍາກ່າວເຖິງພະຍານາກມີຄວາມກະສັນຄິດຮອດຄິດເຖິງນາງ ສີດາຈັນ ຜູ້ເປັນພັນລະຍາພະຍານາກກິນບໍ່ແຊບນອນບໍ່ຫຼັບໂສກເສົ້າເຫງົາໃຈ ນັບແຕ່ມື້ສິນໄຊເຂົ້າເມືອງເປັງຈານ

(ສິມທະເພີຍ ສີວົງສັກ ແລະອໍາໄພ ສອນທະລາ, 2019).

**III. ຂັ້ນສະຫຼຸບ**

- **ຄູເນັ້ນຈຸດສໍາຄັນຂອງບົດຮຽນ**

- ປະຫວັດຂອງນັກແຕ່ງ ແລະ ໄລຍະເວລາຂອງການແຕ່ງ

- ກ່ຽວກັບໜັງສືເລື່ອງ: “ສິນໄຊ”

- ເນື້ອໃນຂອງໜັງສືເລື່ອງ “ສິນໄຊ”

**IV. ວັດ ແລະ ປະເມີນ**

- ຄູຖາມຂໍ້ຂ້ອງໃຈຂອງນັກຮຽນ (ຖ້າມີ) ຄູອະທິບາຍຄືນ
- ຄູຕັ້ງຄໍາຖາມ: ແຕ່ລະຂໍ້ຂອງບົດຮຽນ
- ໃຫ້ນັກຮຽນຕອບ 1-2 ຄົນ
- ຄູສັງເກດຄໍາຕອບ ແລະ ສະຫຼຸບຄືນ

- **ຂັ້ນຕັກເຕືອນ**

- ຄູແນະນໍານັກຮຽນອ່ານບົດຮຽນໃໝ່
- ສຶກສາແນວຄິດຂອງຜູ້ຮຽນ
- ມອບວຽກບ້ານ

ຂໍ້ມູນຕິດຕໍ່:

Email: syvongsak123@gmail.com ໂທ: +85620 98003648

**ເອກະສານອ້າງອີງ**

ສົມທະເພີຍ ສີວົງສັກ ແລະ ອຳໄພ ສອນທະລາ. (2019). **ວັນນະຄະດີລ້ານຊ້າງ** ຄະນະສຶກສາສາດ ມະຫາວິທະຍາໄລສຸພານຸວົງ.

ສິລາ ວີຣະວົງ (ພສ. 2512) **ສັງສິນໄຊ** ວັນນະຄະດີຄຳກອນຊັ້ນຍອດຂອງລາວ, ກະຊວງທຳມະການ.

ຄູສອນປະຈຳວິຊາ

ປທ.ສົມທະເພີຍ ສີວົງສັກ